ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222,451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117

E-mail:Lcc@laocement.com,www.laocement.com

ເລກທີ 202 /ບຊລ

ນະຄອນຫຼວງວຽງຈັນ, ວັນທີ 31 AUG 2020

ບົດລາຍງານກ່ຽວກັບຢຸດຕິ
ການຜະລິດຂອງບໍລິສັດຊີມັງລາວມະຫາຊົນ

ຮຽນ: ທ່ານ ຫົວໜ້າຄະນະກຳມະການຄຸ້ມຄອງຫຼັກຊັບລາວ
ທ່ານ ຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ
ບັນດາທ່ານຜູ້ຖືຮຸ້ນ ຂອງບໍລິສັດ ຊີມັງລາວມະຫາຊົນ

ນັບແຕ່ຕົ້ນປີ 2020 ເປັນຕົ້ນມາ, ເນື່ອງຈາກມີຜົນກະທົບຈາກການລະບາດຂອງພະຍາດໂຄວິດ - 19,ອີງຕາມໜັງສືແຈ້ງການຈາກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ນັບແຕ່ເດືອນ 4-6/2020 ບໍລິສັດຊີມັງລາວມະຫາຊົນ ໄດ້ຢຸດຕິການຜະລິດຊີມັງ. ທ້າຍເດືອນ 6/2020 ຄາດຄະເນການປະມູນດຳເນີນທຸລະກິດຈະຂາດທຶນຢ່າງເນື່ອງ ແລະ ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ຕາມຄຳເຫັນຂອງສະພາບໍລິຫານ ແມ່ນໃຫ້ສືບຕໍ່ຢຸດຕິການຜະລິດຈົນຮອດປະຈຸບັນນີ້, ສະພາບໍລິຫານຂອງບໍລິສັດໄດ້ຮຽກຮ້ອງໃຫ້ບໍລິສັດຮີບຮ້ອນວາງແຜນການດຳເນີນທຸລະກິດໃນຕໍ່ໜ້າຂອງບໍລິສັດໃຫ້ໄດ້ໂດຍໄວ, ຜ່ານການຄົ້ນຄ້ວາຢ່າງລະອຽດຂອງບໍລິສັດ ໃນເດືອນ 7/2020 ລາຍລະອຽດມີເນື້ອໃນດັ່ງລຸ່ມນີ້ :

I. ສາເຫດຕົ້ນຕໍທີ່ພາໃຫ້ບໍລິສັດຢຸດຕິການຜະລິດ

1. ຜະລິດຕະພັນຊີມັງລົ້ນຕະຫຼາດການແຂ່ງຂັນນັບມື້ນັບໜັກໜ່ວງ, ທ້າຍປີ 2019 ກຳລັງການຜະລິດຊີມັງພາຍໃນ ສປປລາວ ລວມໂຮງງານທີ່ກຳລັງກໍ່ສ້າງ ແລະໄດ້ກໍ່ສ້າງສຳເລັດແລ້ວ, ສາມາດຜະລິດຊີມັງໄດ້ຈຳນວນ 13 ລ້ານໂຕນ/ປີ ແຕ່ການຊົມໃຊ້ຊີມັງໝົດປີ 2019 ພຽງແຕ່ 4 ລ້ານຫ້າແສນໂຕນ,ທ້ອງຕະຫຼາດຊີມັງໃນປະຈຸບັນນີ້ແມ່ນຕົກຢູ່ໃນສະພາບຜະລິດຕະພັນຊີມັງລົ້ນຕະຫຼາດ ໂຮງງານຊີມັງໃໝ່ທີ່ມີຂະໜາດໃຫ່ຍໄດ້ຫຼຸດລາຄາຕ່ຳກວ່າຕົ້ນທຶນແຂ່ງຂັນກັນຂາຍ ເພື່ອຜູກຂາດທາງດ້ານຕະຫຼາດ ພາໃຫ້ລາຄາຈຳໜ່າຍຊີມັງຫຼຸດລົງຢ່າງຫຼວງຫລາຍ, ບັນດາທຸລະກິດຊີມັງຫຼຸດລາຄາລົງເພື່ອແຂ່ງຂັນກັນຂາຍ ໃນຂົງເຂດທີ່ບໍ່ເໝາະສົມ ພາໃຫ້ທຸລະກິດຊີມັງຈຳນວນຫຼາຍຂາດທຶນ,ສຳລັບບໍລິສັດ ຊີມັງລາວ ມະຫາຊົນ ນັບແຕ່ກໍ່ສ້າງໂຮງງານເປັນຕົ້ນມາ ໄດ້ຜະລິດຊີມັງກາກະ

ທົ່ງທອງ ໂດຍໃຊ້ມາດຕະຖານ ASTM ຮັກສາດ້ານຄຸນນະພາບໄດ້ດີ, ຕົ້ນທຶນການຜະລິດຖ້າ ທຽບໃສ່ຊີມັງຍີ່ຫໍ້ອື່ນແມ່ນສູງກວ່າໜຸ່, ແຕ່ວ່າສາເຫດທີ່ພາໃຫ້ບໍລິສັດຂາດທຶນແມ່ນ ຍ້ອນວ່າລາ ຄາການຂາຍຊີມັງຢູ່ໃນທ້ອງຕະຫຼາດຕ່ຳກວ່າຕົ້ນທຶນການຜະລິດຊີມັງ ຂອງບໍລິສັດ.

2. ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ຢ່າງໜັກໜ່ວງ, ນັບແຕ່ຕົ້ນປີ 2020 ເປັນຕົ້ນມາ ໂດຍອີງຕາມໜັງສືແຈ້ງການຈາກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ນັບແຕ່ ເດືອນ 4-6/2020 ມາຮອດປະຈຸບັນນີ້ ບໍລິສັດຊີມັງລາວມະຫາຊົນ ໄດ້ຢຸດຕິການຜະລິດຊີມັງ, ເດືອນ 4-7/2020 ຜະລິດຕະພັນໄດ້ຫຼຸດລົງເປັນຈຳນວນ 60,000 ໂຕນເນື່ອງຈາກວ່າມີຜົນ ກະທົບຈາກການລະບາດຂອງພະຍາດໂຄວິດ-19,ເຮັດໃຫ້ບໍລິສັດເສຍໂອກາດທີ່ດີໃນການຈຳ ໜ່າຍຊີມັງໃນລະດູແລ້ງ.

3. ພົບຄວາມຫຍຸ້ງຍາກໃນການເກັບໜີ້ຕ້ອງຮັບ, ເນື່ອງຈາກວ່າຜູ້ລົງທຶນຂອງບັນດາໂຄງການໃຫ່ຍໆ ເງິນທຶນບໍ່ພຽງພໍບວກກັບມີຜົນກະທົບຈາກໂຄວິດ-19. ໃນປີນີ້ ພາໃຫ້ການລົງທຶນ ແລະໂຄງການ ກໍ່ສ້າງຢູ່ໃນ ສປປລາວ ມີການຫຼຸດລົງຢ່າງໜັກໜ່ວງ. ລູກຄ້າຊີມັງຈຳນວນຫຼາຍຢູ່ໃນ ສປປລາວ ກໍ່ ຕົກຢູ່ໃນສະພາບການດຳເນີນທຸລະກິດທີ່ລຳບາກຄືກັນ, ຂາດເງິນທຶນ, ສະນັ້ນຈຶ່ງພາໃຫ້ແກ່ຍາວ ການຊຳລະສະສາງຄ່າຊີມັງເປັນເລື່ອງປົກກະຕິ, ເຮັດໃຫ້ບັນດາທຸລະກິດຊີມັງເກັບໜີ້ຕ້ອງຮັບຍາກ ສຳລັບບໍລິສັດ ຂອງພວກເຮົາແມ່ນຍ້ອນວ່າມີລູກຄ້າລາຍໃຫ່ຍບໍ່ໄດ້ຊຳລະສະສາງຄ່າຊີມັງໄດ້ຕາມ ກຳນົດເວລາ ພາໃຫ້ບໍລິສັດຂາດເງິນໝຸນວຽນ, ບໍ່ສາມາດຮັບປະກັນໃຫ້ໂຮງງານຟື້ນຟູການຜະລິດ ຢ່າງເນື່ອງໄດ້.

II. <u>ວິທີແກ້ໄຂ ແລະແນວທາງໃນຕໍ່ໜ້າ</u>

ສະເພາະຄວາມຫຍຸ້ງຍາກ ແລະບັນຫາຂ້າງເທິງນີ້ ບໍລິສັດ ໄດ້ວາງມາດຕະການແກ້ໄຂຕ່າງໆ ເພື່ອປະຢັດລາຍຈ່າຍ ເພີ່ມລາຍຮັບໃນຊ່ວງໄລຍະຢຸດການຜະລິດ ບໍລິສັດຈະອີງຕາມຄວາມຮຽກຮ້ອງ ຂອງຜູ້ຖືຮຸ້ນແຕ່ລະຝ່າຍ ແລະສະພາບໍລິຫານຂອງບໍລິສັດ. ບໍລິສັດໄດ້ວາງແຜນການດຳເນີນທຸລະກິດ ໃນຕໍ່ໜ້າ ມີລາຍລະອຽດດັ່ງລຸ່ມນີ້ :

1. ຮີບເລັ່ງວຽກການເກັບໜີ້ຕ້ອງຮັບໂດຍຜ່ານການຊ່ວຍເຫຼືອຈາກຜູ້ຖືຮຸ້ນແຕ່ລະຝ່າຍ ແລະວິທີທາງ ດ້ານກົດໝາຍ.

2. ດຶງດູດຜູ້ຮ່ວມມືມາກໍ່ສ້າງສາຍການຜະລິດຫີນປຸນໃນບໍ່ຫີນປຸນຂອງໂຮງງານ ແລະເດືອນ 4/2020 ໄດ້ເລີ່ມຕົ້ນການຈຳໜ່າຍຫີນປຸນສູ່ຕະຫຼາດພາຍນອກ ຊຶ່ງໃນເດືອນ 4-7/2020 ໄດ້ຈຳໜ່າຍຫີນ ປຸນຈຳນວນ 48,800 ແມັດກ້ອນ, ສ້າງລາຍຮັບທັງໝົດປະມານຈຳນວນ 25,000 ໂດລາ.

3. ຮອດທ້າຍເດືອນ 5/2020 ໄດ້ສຳເລັດການຮ່ວມກັນລວບລວມສຳນັກງານຢູ່ວຽງຈັນກັບໂຮງງານ ຊີມັງວັງວຽງ ຫລັງ 2 ເພື່ອຫຼຸດຜ່ອນອົງການຈັດຕັ້ງບາງສ່ວນ, ຫຼຸດຜ່ອນຈຳນວນພິນ ໂດຍການຜັດປ່ຽນຜຽນວຽກຂອງແຕ່ລະຄົນໃຫ້ເໝາະສົມຕາມວຽກງານ ເພື່ອຫຼຸດຜ່ອນຕົ້ນທຶນຄ່າໃຊ້ຈ່າຍ, ເດືອນ 1-7/2020 ຫຼຸດຜ່ອນຈຳນວນພິນໄດ້ 36 ຄົນ, ທາງໂຮງງານໄດ້ຜັນປ່ຽນຜຽນງານເຮັດວຽກ ແລະໄດ້ແຈ້ງໃຫ້ພະນັກງານພັກຜ່ອນໃນຊ່ວງໄລຍະຢຸດການຜະລິດ, ຕົ້ນທຶນຄ່າໃຊ້ຈ່າຍແຮງງານຂອງເດືອນ 7/2020 ຖ້າທຽບໃສ່ເດືອນ 4/2020 ແມ່ນໄດ້ຫຼຸດລົງ 42,56%.

4. ສືບຕໍ່ແລ່ນວຽກສິດທິສຳຫຼວດບໍ່ຖ່ານຫີນ, ປະຈຸບັນນີ້ຢູ່ໃນຂັ້ນຕອນການປະສານສົມທົບກັບລັດຖະບານ ເພື່ອດຳເນີນວຽກການປະມູນບົດລາຍງານປະລິມານສະສົມຖ່ານຫີນ, ໃນຕໍ່ໜ້າຄິດວ່າຈະຮ່ວມກັບຜູ້ຮ່ວມມືໃນການຂຸດຄົ້ນເພື່ອໃຫ້ໄດ້ຮັບຜົນປະໂຫຍດ ຫຼືລາຍຮັບ.

5. ພະຍາຍາມດຶງດູດຜູ້ຮ່ວມມືມາເພື່ອດຳເນີນການປະກອບຮຸ້ນຂອງບໍລິສັດ, ປະຈຸບັນນີ້ຜູ້ຖືຮຸ້ນລາຍໃຫ່ຍສາມບໍລິສັດໄດ້ພະຍາຍາມຊອກຫາຜູ້ລົງທຶນທາງດ້ານຍຸດທະສາດເພື່ອມາເປັນຜູ້ຮ່ວມມືພາໃຫ້ບໍລິສັດດຳເນີນການປະກອບຮຸ້ນ ແລະປະຕິຮູບ, ເພີ່ມລາຍຮັບດ້ວຍການຂະຫຍາຍທຸລະກິດເຊັ່ນ : ຊຸກຍູ້ການພັດທະນາຂຸດຄົ້ນຊັບພະຍາກອນ ແລະອື່ນໆ.

ສຸດທ້າຍນີ້ບໍລິສັດ ຈະພະຍາຍາມ, ສູ້ຊົນໂດຍໃຊ້ມາດຕະການ ແລະແນວຄິດຂ້າງເທິງໃຫ້ວຽກການປະກອບຮຸ້ນ ແລະປະຕິຮູບໃຫ້ສຳເລັດ ເພື່ອໃຫ້ບໍລິສັດ ໄດ້ດຳເນີນທຸລະກິດຢ່າງສະໝ່ຳສະເໝີ ໂດຍພາຍໃຕ້ການນຳພາຂອງກອງປະຊຸມຜູ້ຖືຮຸ້ນ ແລະກອງປະຊຸມສະພາບໍລິຫານ ເພື່ອຮັບປະກັນຜົນປະໂຫຍດຂອງຜູ້ຖືຮຸ້ນແຕ່ລະຝ່າຍ.

ດັ່ງນັ້ນ, ຈຶ່ງໄດ້ລາຍງານມາຍັງທ່ານ ເພື່ອຊາບ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ຜູ້ອຳນວຍການ ບໍລິສັດ,

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຈ່າງ ລີ